ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ 444

ກະຊວງສຶກສາທິການ ແລະ ກິລາ ເລກທີ /ສສກ

ນະຄອນຫຼວງວຽງຈັນ, ວັນທີ 06 ພຶດສະພາ 2021

# ແຈ້ງການ

**ເຖິງ :** - ບັນດາທ່ານ ຫົວໜ້າຫ້ອງການ, ຫົວໜ້າກົມ, ຜູ້ອຳນວຍການສະຖາບັນ, ສຳນັກພິມສຶກສາ ແລະ ກິລາ ແລະ ສູນ

- ທ່ານ ອະທິການບໍດີມະຫາວິທະຍາໄລ 4 ແຫ່ງ
- ທ່ານ ຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ
- ທ່ານ ປະທານສະມາຄົມການສຶກສາພາກເອກະຊົນ
- ທ່ານ ຜູ້ອຳນວຍການສະຖານການສຶກສາ ແລະ ກິລາ ທັງພາກລັດ ແລະ ເອກະຊົນ

**ເລື່ອງ:** ການສືບຕໍ່ເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ພາຍໃນ ຂະແໜງການສຶກສາ ແລະ ກິລາ

- ອີງຕາມ ຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດໂຄວິດ-19;
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 462/ຫສນຍ, ລົງວັນທີ 05 ພຶດສະພາ 2021 ວ່າດ້ວຍການສືບຕໍ່ຈັດຕັ້ງປະຕິບັດຄຳສັ່ງເລກທີ 15/ນຍ, ລົງວັນທີ 21 ເມສາ 2021;
- ອີງຕາມ ຄຳສັ່ງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 421/ສສກ, ລົງວັນທີ 21 ເມສາ 2021 ວ່າດ້ວຍການຜັນຂະຫຍາຍຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ແລະ ຄຳສັ່ງເພີ່ມເຕີມຂອງຫົວໜ້າຄະນະສະເພາະກິດກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 428/ສສກ ລົງວັນທີ 23 ເມສາ 2021.

ເພື່ອເປັນການສືບຕໍ່ເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມພ້ອມຮອບດ້ານເພື່ອຕ້ານພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ ໂຄວິດ-19 ທີ່ຂະແໜງການສຶກສາ ແລະ ກິລາ ໃນຂອບເຂດທົ່ວປະເທດ.

**ຫົວໜ້າຄະນະສະເພາະກິດ ກະຊວງສຶກສາທິການ ແລະ ກິລາ ອອກແຈ້ງການ ດັ່ງນີ້:**

1. ໃຫ້ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນ, ພະນັກງານ, ຄູ-ອາຈານ ແລະ ນັກຮຽນ-ນັກສຶກສາທຸກຄົນ ສືບຕໍ່ເພີ່ມທະວີປະຕິບັດມາດຕະການຕ່າງໆທີ່ລະບຸໃນຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຄຳແນະນຳຂອງຄະນະສະເພາະກິດຂັ້ນສູນກາງ, ຄຳສັ່ງຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ຄຳສັ່ງເພີ່ມເຕີມຂອງຫົວໜ້າຄະນະສະເພາະກິດກະຊວງສຶກສາທິການ ແລະ ກິລາ ແລະ ຄຳສັ່ງແນະນຳຂອງຄະນະສະເພາະກິດຂັ້ນແຂວງ/ນະຄອນຫຼວງ **ອອກໄປຕື່ມອີກ 15 ວັນ** ຢ່າງເຂັ້ມງວດ ນັບແຕ່ວັນທີ 06 - 20 ພຶດສະພາ 2021 ແລະ ມອບໃຫ້ຜູ້ບໍລິຫານການສຶກສາ ແລະ ກິລາທຸກຂັ້ນ ຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ແລະ ລາຍງານໃຫ້ຄະນະສະເພາະກິດກະຊວງສຶກສາທິການ ແລະ ກິລາ ຮັບຊາບທຸກອາທິດ; ຖ້າພົບວ່າການຈັດຕັ້ງ ຫຼື ບຸກຄົນໃດ ໃນຂອບເຂດຄວາມ

ຮັບຜິດຊອບຂອງຕົນ ລະເມີດບັນດາຄຳສັ່ງ, ແຈ້ງການ ແລະ ຄຳແນະນຳ ທີ່ກ່າວມານັ້ນ ມອບໃຫ້ການຈັດຕັ້ງບ່ອນນັ້ນລາຍງານໂດຍດ່ວນກ່ຽວກັບມາດຕະການລົງວິໄນເພື່ອນຳສະເໜີໃຫ້ຄະນະສະເພາະກິດຂັ້ນຂອງຕົນ ແລະ ຂັ້ນກະຊວງ ພິຈາລະນາ;

2. ໃຫ້ສະຖານການສຶກສາທັງພາກລັດ ແລະ ເອກະຊົນ ໃນຂອບເຂດທົ່ວປະເທດ ສືບຕໍ່ພັກຮຽນຊົ່ວຄາວ ເຊິ່ງປະກອບມີ: ໂຮງລ້ຽງເດັກ, ໂຮງຮຽນອະນຸບານ, ໂຮງຮຽນປະຖົມສຶກສາ, ໂຮງຮຽນມັດທະຍົມສຶກສາ, ໂຮງຮຽນສຶກສາສົງ, ໂຮງຮຽນສຶກສາພິເສດ, ໂຮງຮຽນກິນນອນ, ສູນຝຶກອົບຮົມວິຊາຊີບ, ວິທະຍາໄລ, ສະຖາບັນ ແລະ ມະຫາວິທະຍາໄລ;
3. ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ສືບຕໍ່ປະສານສົມທົບກັບຄະນະສະເພາະກິດ ຂັ້ນແຂວງ/ນະຄອນຫຼວງ ເພື່ອເຝົ້າລະວັງ, ຕິດຕາມ ແລະ ປະເມີນຄວາມສ່ຽງການແຜ່ລະບາດຂອງພະຍາດໂຄວິດ-19 ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອສະກັດກັ້ນ, ຄວບຄຸມ ແລະ ແກ້ໄຂສະພາບການລະບາດໃຫ້ທັນການ;
4. ໃນໄລຍະພັກການຮຽນຊົ່ວຄາວ ມອບໃຫ້ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ກົມການສຶກສາກ່ອນໄວຮຽນ, ກົມສາມັນສຶກສາ, ກົມສ້າງຄູ ແລະ ສູນໄອຊີທີ ສືບຕໍ່ເຜີຍແຜ່ການຮຽນ-ການສອນ ຜ່ານໂທລະພາບການສຶກສາ-ກິລາ, ວິທະຍຸ, ຖານການຮຽນຮູ້ການຮຽນ-ການສອນ ຄັງປັນຍາລາວ (Teaching-Learning Platform); ສຳລັບການສຶກສາຄູ, ພະລະ ແລະ ສິລະປະສຶກສາ, ການສຶກສານອກໂຮງຮຽນ, ອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ແມ່ນໃຫ້ຈັດການຮຽນ-ການສອນທາງໄກ ໃຫ້ແກ່ກຸ່ມເປົ້າໝາຍຕາມຄວາມເໝາະສົມ;
5. ໄລຍະປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ມອບໃຫ້ກົມວິຊາການ ແລະ ສະຖາບັນ ອອກແຈ້ງການລະອຽດສະເພາະກ່ຽວກັບການຈັດການຮຽນ-ການສອນ ທີ່ເໝາະສົມກັບເງື່ອນໄຂຕົວຈິງ, ສຳລັບຫ້ອງການ, ກົມ, ສູນ ແລະ ພາກສ່ວນຕ່າງໆ ໃຫ້ສຸມໃສ່ປະຕິບັດວຽກທີ່ເປັນບູລິມະສິດຂອງຕົນໃຫ້ເປັນປົກກະຕິ;
6. ສຳລັບສຳນັກກະຊວງ, ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ ແລະ ສະຖານການສຶກສາທົ່ວປະເທດແຕ່ລະວັນລັດຖະການໃຫ້ຜັດປ່ຽນກັນມາປະຈຳການ ແລະ ປ້ອງກັນ-ເວນຍາມບໍ່ໃຫ້ຂາດ, ຈຳນວນໜຶ່ງແມ່ນໃຫ້ເຮັດວຽກຢູ່ເຮືອນ ຫຼື ທີ່ພັກອາໄສ ໂດຍຜ່ານ: ໂທລະສັບ, ອີເມວ ແລະ ລະບົບກອງປະຊຸມທາງໄກ. ເພື່ອຫຼຸດຜ່ອນຄວາມແອອັດໃນສະຖານທີ່ເຮັດວຽກ ໃຫ້ປະຕິບັດດັ່ງນີ້:
   - 6.1 ສຳນັກກະຊວງ ເຂດຊຽງຍືນ, ສີສະເກດ, ເຈົ້າອານຸວົງ ແລະ ຫຼັກ 8 (ທ່າເດື່ອ)
     ຄະນະຫ້ອງການ/ຄະນະກົມ/ຄະນະອຳນວຍການສະຖາບັນ, ສຳນັກພິມ ແລະ ສູນ 1 ຄົນ/ມື້ ແລະ ຂັ້ນພະແນກ-ວິຊາການ 2 ຄົນ/ມື້;
   - 6.2 ມະຫາວິທະຍາໄລ
     ຄະນະອະທິການບໍດີ 1 ຄົນ/ມື້, ຄະນະບໍດີ 1 ຄົນ/ມື້, ຄະນະຫ້ອງການ 1 ຄົນ/ມື້, ຄະນະພາກວິຊາ 1 ຄົນ/ມື້, ວິຊາການ 2 ຄົນ/ມື້
   - 6.3 ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ
     ຄະນະພະແນກ 1 ຄົນ/ມື້ ແລະ ວິຊາການ 2 ຄົນ/ມື້;
   - 6.4 ຫ້ອງການສຶກສາທິການ ແລະ ກິລາ ເມືອງ/ນະຄອນ
     ຄະນະຫ້ອງການ 1 ຄົນ/ມື້ ແລະ ວິຊາການ 2 ຄົນ/ມື້;
   - 6.5 ການປະຈຳການຂອງຄະນະສະເພາະກິດຂອງຂະແໜງການສຶກສາ ແລະ ກິລາແຕ່ລະຂັ້ນ ແມ່ນອີງຕາມຄວາມຮຽກຮ້ອງຕ້ອງການຂອງໜ້າວຽກຕົວຈິງ;
   - 6.6 ໃນໄລຍະມາປະຈຳການໃຫ້ຈັດຕັ້ງກັນກວດກາວັດແທກອຸນຫະພູມ, ລ້າງມືດ້ວຍນ້ຳສະອາດໃສ່ສະບູ ຫຼື ເຈວລ້າງມື, ໃສ່ຜ້າອັດປາກ-ດັງ ແລະ ອະນາໄມສະຖານທີ່ບ່ອນເຮັດວຽກເປັນປົກກະຕິ;
7. ໃຫ້ຜູ້ບໍລິຫານການສຶກສາ ແລະ ກິລາ, ຄູ-ອາຈານ ແລະ ນັກຮຽນ-ນັກສຶກສາ ຈົ່ງມີສະຕິໃນການຮັບຂໍ້ມູນຂ່າວສານຈາກສື່ອອນລາຍ ໂດຍສະເພາະແມ່ນຂ່າວທີ່ບໍ່ມີມູນຄວາມຈິງ ຫ້າມບໍ່ໃຫ້ເຜີຍແຜ່ ຫຼື ແຊຕໍ່ຢ່າງ

ເດັດຂາດ, ໃຫ້ຕິດຕາມຂ່າວສານຈາກສື່ອອນລາຍທີ່ເຊື່ອຖືໄດ້ຄື: **ສູນຂ່າວສານການແພດສຸຂະສຶກສາ (ສະເພາະຂໍ້ມູນກ່ຽວກັບການແຜ່ລະບາດຂອງພະຍາດໂຄວິດ-19)**; ສໍາລັບຂໍ້ມູນຂ່າວສານສຶກສາ ແລະ ກິລາ ໃຫ້ຕິດຕາມຂ່າວຈາກ: **Edu-Sport TV online ແລະ ສູນໂຄສະນາຂ່າວສານການສຶກສາ ແລະ ກິລາ**; ຖ້າມີກໍລະນີຮີບດ່ວນໃຫ້ປະສານ ແລະ ລາຍງານຫາຫ້ອງການກະຊວງສຶກສາທິການ ແລະ ກິລາ, ຈຸດປະສານງານຄະນະສະເພາະກິດກະຊວງສຶກສາທິການ ແລະ ກິລາ ໂທ/ແຟັກ: 021 254702, ຫຼື whatsapp 020 22475552, 020 54922051, ອີເມວ:sungluam210@gmail.com;

8. ໃຫ້ສືບຕໍ່ປຸກລະດົມພະນັກງານ, ຄູ-ອາຈານ, ນັກຮຽນ-ນັກສຶກສາ ແລະ ນັກກິລາທຸກຄົນ ໃນຂະແໜງການສຶກສາ ແລະ ກິລາ ໄປສັກວັກຊີນກັນພະຍາດ ໂຄວິດ-19 ຕາມເຂດບໍລິການທີ່ທາງການກໍານົດໃຫ້ສໍາເລັດໂດຍໄວ;
9. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ **ວັນທີ 06 ພຶດສະພາ 2021 ຫາ ເວລາ 24:00 ໂມງ ຂອງວັນທີ 20 ພຶດສະພາ 2021.** ໃນກໍລະນີທີ່ມີການປ່ຽນແປງ ກະຊວງສຶກສາທິການ ແລະ ກິລາ ຈະແຈ້ງໃຫ້ຊາບ ເປັນແຕ່ລະໄລຍະ.

ຮອງລັດຖະມົນຕີ

ຫົວໜ້າຄະນະສະເພາະກິດກະຊວງສຶກສາທິການ ແລະ ກິລາ

ນ.ສັນທະລີ ສິຣິພິງພັນ